# ລາວ - ຫວຽດນາມຍົກລະດັບການກວດກາພາຍໃນທະນາຄານກາງ




**ຂ່າວ - ພາບ : ຣັດສະໝີ ດວງສັດຈະ**

ທະນາຄານແຫ່ງ ສປປລາວ ແລະ ທະນາຄານແຫ່ງລັດ ສ.ສ ຫວຽດນາມໄດ້ຮ່ວມກັນຈັດສຳມະນາພາຍໃຕ້ຫົວຂໍ້ " ການກວດກາບົນພື້ນຖານຄວາມສ່ຽງຢູ່ທະນາຄານແຫ່ງລັດ " ໂດຍຢູ່ພາຍໃຕ້ຄວາມຮັບຜິດຊອບຂອງ

ທ່ານ ພັນທະນູ ໄຊຍະເພັດ ຮອງຫົວໜ້າກົມພົວພັນສາກົນ ທະນາຄານແຫ່ງ ສປປລາວ, ນອກນີ້ກໍມີຄະນະກົມກວດກາ, ນັກວິທະຍາກອນຈາກທະນາຄານແຫ່ງລັດ ສສ ຫວຽດນາມ ແລະ ນັກສຳມະນາກອນຈາກທະນາຄານແຫ່ງ ສປປ ລາວ ໃນທົ່ວປະເທດເຂົ້າຮ່ວມເມື່ອວັນທີ 5 ກໍລະກົດ ແລະ ຈະດຳເນີນໄປເປັນເວລາ 5 ມື້.

ທ່ານ ແສງເພັດ ດວງພິລາ ຕາງໜ້າຄະນະຮັບຜິດຊອບການຈັດສຳມະນາໄດ້ກ່າວວ່າ : ການຈັດສຳມະນາຄັ້ງນີ້ຕົ້ນຕໍກໍ່ເພື່ອຍົກລະດັບຄວາມຮູ້ ແລະ ຄວາມເຂົ້າໃຈທາງດ້ານວິຊາການໃຫ້ພະນັກງານຂອງທະນາຄານແຫ່ງສປປລາວ ກ່ຽວກັບ " ການກວດກາບົນພື້ນຖານຄວາມສ່ຽງຢູ່ໃນທະນາຄານແຫ່ງລັດ " ເຊິ່ງໄດ້ປະກອບດ້ວຍເນື້ອໃນ

ສຳຄັນຕົ້ນຕໍ  ໂດຍພາກທີ່ໜຶ່ງແມ່ນການສັງລວມກ່ຽວກັບການກວດກາ,ການກວດກາພາຍໃນທະນາຄານກາງ,ພາກທີ່ສອງແມ່ນການກວດກາພາຍໃນບົນພື້ນຖານຄວາມສ່ຽງ ແລະ ພາກທີ່ສາມແມ່ນບົດຮຽນ ແລະ ປະສົບການໃນການກວດກາຢູ່ ສ.ສ ຫວຽດນາມ ( ບົດລາຍງານການກວດກາອີງໃສ່ການເຄື່ອນໄຫວ ) , ປະສົບການໃນການກວດກາຢູ່ຫວຽດນາມ ( ບົດລາຍງານການກວດກາ ການລາຍງານທາງດ້ານການເງິນ,ການກໍ່ສ້າງພື້ນຖານ ), ປະສົບການໃນການກວດກາຢູ່ຫວຽດນາມ ( ບົດລາຍງານການກວດກາຜ່ານລະບົບ IT ) ແລະ ຂັ້ນແຜນການກວດກາບົນພື້ນຖານຄວາມສ່ຽງ ແລະ ການປະຕິບັດການກວດກາບົນພື້ນຖານຄວາມສ່ຽງ.

ທະນາຄານແຫ່ງ ສປປ ລາວ ແລະ ທະນາຄານແຫ່ງລັດ ສ.ສ ຫວຽດນາມ ເຄີຍມີມູນເຊື້ອແຫ່ງການພົວພັນ ແລະ ຮ່ວມມືທີ່ສະໜິດສະໜົມມາເປັນເວລາເກືອບເຄິ່ງສະຕະວັດ ເຊິ່ງໃນໄລຍະແຫ່ງການກຳເນີດຂອງທະນາຄານລາວ, ທະນາຄານແຫ່ງລັດ ສສ ຫວຽດນາມ ກໍໄດ້ໃຫ້ການຊ່ວຍເຫຼືອກໍ່ສ້າງບຸກຄາລະກອນແກ່ລາວຕະຫຼອດມາ ແລະ ໃນຮອບປີ 2010 ນີ້ ທະນາຄານແຫ່ງລັດ ສ.ສ ຫວຽດນາມ ກໍ່ໄດ້ສົ່ງນັກວິທະຍາກອນທີ່ມີຄວາມຊ່ຽວຊານໃນຂະແໜງການຕ່າງໆ ດ້ານການທະນາຄານມາປາຖະກະຖາ ຫຼື ບັນຍາຍໃຫ້ນັກວິຊາການທະນາຄານຂອງລາວໄດ້ຫຼາຍຄັ້ງ ແລະ ໃນຕໍ່ໜ້ານີ້ ທະນາຄານກາງຂອງສອງປະເທດຍັງຈະສືບຕໍ່ເພີ່ມທະວີການພົວພັນ ແລະ ຮ່ວມມືໃຫ້ກ້າວສູ່ລວງເລິກຕາມທີ່ທ່ານຜູ້ວ່າການທະນາຄານກາງຂອງສອງປະເທດໄດ້ເຊັນບົດບັນທຶກຮ່ວມກັນ ( MOU ) ໃນທ້າຍເດືອນທັນວາຂອງປີຜ່ານມາ.